ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຈັດຕັ້ງແລະພະນັກງານ ເລກທີ 68 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 09 ພຶດສະພາ 2024

ສຳນັກງານ ຄດຊ
ຮັບ ເລກທີ 577
ວັນທີ 09 MAR 2024
ໂທລະສັບ 021 217770

# ແຈ້ງການ

ເຖິງ: - ທ່ານ ຫົວໜ້າກົມ-ທຽບເທົ່າພາຍໃນ ທະນາຄານແຫ່ງ ສປປ ລາວ.

- ທ່ານ ຜູ້ອຳນວຍການທະນາຄານການຄ້າຕ່າງປະເທດລາວ ແລະ ທະນາຄານນະໂຍບາຍ.

ເລື່ອງ: **ການປັບປຸງການຈັດຕັ້ງຢູ່ ທະນາຄານແຫ່ງ ສປປ ລາວ.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຈັດຕັ້ງແລະພະນັກງານ ສະບັບເລກທີ 343/ ທຫລ ລົງວັນທີ 12 ກໍລະກົດ 2021 ແລະ ອີງຕາມການຕົກລົງເຫັນດີຂອງຂັ້ນເທິງທີ່ກ່ຽວຂ້ອງ.

ກົມຈັດຕັ້ງແລະພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: **ໃນເດືອນ ເມສາ-ພຶດສະພາ 2024** ຢູ່ ທະນາຄານແຫ່ງ ສປປ ລາວ ໄດ້ປະກາດການນຳໃຊ້ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຮງພິມທະນະບັດ ແລະ ປັບປຸງບຸກຄະລາກອນຫຼາຍຕຳແໜ່ງງານທີ່ສຳຄັນ, ດັ່ງລາຍລະອຽດລຸ່ມນີ້:

**I. ຫ້ອງການ**

1. ທ່ານ **ສີສຸກ ລາດຊະວົງ** ອາດີດຫົວໜ້າພະແນກແຜນການ-ການເງິນ, ບັນຊີແລະສາງ, ໂຮງພິມທະນະບັດ ທຫລ ເປັນຫົວໜ້າໂຮງຮຽນອະນຸບານທະນາຄານ;

2. ທ່ານ ນ. **ລັດຕະນະຄອນ ແກ້ວຜາສຸກ** ວິຊາການ, ກົມບໍລິການທະນາຄານ ເປັນເລຂານຸການປະຈຳທ່ານ ນ. ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ.

**II. ກົມຈັດຕັ້ງແລະພະນັກງານ**

1. ທ່ານ **ນູໂວ ສາຍນໍລະດີ** ອາດີດຮອງຫົວໜ້າພະແນກກິງຈັກການຈັດຕັ້ງລັດ ເປັນຮອງຫົວໜ້າພະແນກກໍ່ສ້າງພັກ;

2. ທ່ານ **ບຸນມີ ຈັນທະວົງ** ອາດີດຮອງຫົວໜ້າພະແນກພັດທະນາພະນັກງານ ເປັນຮອງຫົວໜ້າພະແນກກົງຈັກການຈັດຕັ້ງລັດ.

**III. ກົມບໍລິການທະນາຄານ**

1. ທ່ານ ນ. **ອຸທິດ ສົມບູນຂັນ** ອາດີດຮອງຫົວໜ້າພະແນກບັນຊີ ໄດ້ຖືກອະນຸມັດໃຫ້ອອກພັກການ-ຮັບອຸດໜູນບຳນານ ຕາມລະບຽບການ ນັບແຕ່ເດືອນ **ເມສາ 2024 ເປັນຕົ້ນໄປ;**

2. ທ່ານ ນ. **ພອນຄຳ ກັນນິຖາ** ອາດີດຮອງຫົວໜ້າພະແນກກວດກາພາຍໃນ ໄດ້ຖືກອະນຸມັດໃຫ້ອອກພັກການ-ຮັບອຸດໜູນບຳນານ ຕາມລະບຽບການ ນັບແຕ່ເດືອນ **ພຶດສະພາ 2024 ເປັນຕົ້ນໄປ;**

3. ທ່ານ ນ. **ສຸພາພອນ ແສນລາດ** ວ່າການຫົວໜ້າພະແນກຕະຫຼາດເງິນ ເປັນຫົວໜ້າພະແນກຕະຫຼາດເງິນ.

IV. ກົມພິມຈຳໜ່າຍ

ທ່ານ ນ. ພູຄຳ ໄຊຍະວົງ ອາດີດຮອງຫົວໜ້າກົມພິມຈຳໜ່າຍ ໄດ້ຖືກອະນຸມັດໃຫ້ອອກພັກການ-ຮັບອຸດໜູນບຳນານ ຕາມລະບຽບການ ນັບແຕ່ເດືອນ ພຶດສະພາ 2024 ເປັນຕົ້ນໄປ.

V. ກົມຄຸ້ມຄອງເງິນຕາຕ່າງປະເທດ

ທ່ານ ນ. ສຸພັດຕາ ຈັນເພັງໄຊ ອາດີດເລຂານຸການປະຈຳ ທ່ານຮອງຜູ້ວ່າການ ທຫລ ເປັນຮອງຫົວໜ້າພະແນກຄຸ້ມຄອງເງິນຕາຕ່າງປະເທດດ້ານການຄ້າລະຫວ່າງປະເທດ.

VI. ກົມຄຸ້ມຄອງລະບົບການຊຳລະ

ທ່ານ ທະນົງສັກ ໄຊຊະນິດ ອາດີດຮອງຫົວໜ້າພະແນກນະໂຍບາຍ ແລະ ຍ້ອງຍໍ, ກົມຈັດຕັ້ງແລະພະນັກງານ ທີ່ສຳເລັດການຄົ້ນຄວ້າ ປ.ໂທ ສາຂາ ເສດຖະສາດການເມືອງ ຈາກສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເປັນຮອງຫົວໜ້າພະແນກອອກອະນຸຍາດດຳເນີນທຸລະກິດ.

VII. ກົມເຕັກໂນໂລຊີຂໍ້ມູນຂ່າວສານ

ທ່ານ ຍຸກສະໄໝ ຈັນທະກຸມມານ ວ່າການຫົວໜ້າພະແນກຄຸ້ມຄອງພື້ນຖານໂຄງລ່າງລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ເປັນຫົວໜ້າພະແນກຄຸ້ມຄອງພື້ນຖານໂຄງລ່າງລະບົບເຕັກໂນໂລຊີຂໍ້ມູນຂ່າວສານ.

**VIII. ສະຖາບັນການທະນາຄານ**

**ທ່ານ ສົມວິໄລ ວົງມຸງຄຸນ ອາດີດຮອງຫົວໜ້າພະແນກຈັດຕັ້ງແລະພະນັກງານ, ສະຖາບັນການທະນາຄານ ທີ່ສຳເລັດການຄົ້ນຄວ້າ ປ.ໂທ ສາຂາ ການເງິນ-ການທະນາຄານ ຈາກປະເທດ ສສ. ຫວຽດນາມ ເປັນຮອງຫົວໜ້າພະແນກຫ້ອງການແລະຈັດຕັ້ງ.**

**IX. ໂຮງພິມທະນະບັດທະນາຄານແຫ່ງ ສປປ ລາວ (ປັບປຸງພາລະບົດບາດໃໝ່ ສະບັບເລກທີ 1185/ທຫລ ລົງວັນທີ 07 ທັນວາ 2023)**

- **ທີ່ຕັ້ງ ແລະ ພາລະບົດບາດ:**

**ໂຮງພິມທະນະບັດທະນາຄານແຫ່ງ ສປປ ລາວ ຂຽນຫຍໍ້ ເປັນພາສາລາວວ່າ "ຮພທ" ມີຖານະທຽບເທົ່າກົມ ທີ່ນອນຢູ່ໃນໂຄງປະກອບກົງຈັກການຈັດຕັ້ງຂອງ ທຫລ, ມີພາລະບົດບາດເປັນເສນາທິການໃຫ້ຄະນະຜູ້ວ່າການ ທຫລ ໃນການຈັດພິມທະນະບັດ ແລະ ເອກະສານມີຄ່າ ໃຫ້ມີມາດຕະຖານ ແລະ ຄຸນນະພາບສູງ.**

- **ບຸກຄະລະກອນ:**
- **ຂັ້ນຄະນະກົມປະກອບດ້ວຍ 03 ທ່ານ ຄື:**

**1. ທ່ານ ນ. ຄຳເພີຍ ວໍລະເດດ ເປັນຫົວໜ້າໂຮງພິມທະນະບັດ ທຫລ;**

**2. ທ່ານ ນ. ຄຳພອງ ບຸລົມ, 3. ທ່ານ ວິຊະນຸກອນ ພົມມະວົງ ແລະ 4. ທ່ານ ຄຳອິ້ນ ຈັນສຸລິມາດ ເປັນຮອງຫົວໜ້າໂຮງພິມທະນະບັດ ທຫລ.**

- ຂັ້ນຄະນະພະແນກ:

1. ພະແນກຫ້ອງການ ແລະ ຈັດຕັ້ງ ມີຄະນະພະແນກ 03 ທ່ານ ຄື:
   ① ທ່ານ ນ. ທົງທອງ ສົມມະວົງ ເປັນວ່າການແທນຫົວໜ້າພະແນກ;
   ② ທ່ານ ຄຳສອນ ສະວິສຸກ ແລະ ③ ທ່ານ ກົ້ງ ສີປະເສີດ ເປັນຮອງຫົວໜ້າພະແນກ.
2. ພະແນກກວດກາ ມີຄະນະພະແນກ 02 ທ່ານ ຄື:
   ① ທ່ານ ອາດສະດາ ຄຳພູນວົງ ເປັນຫົວໜ້າພະແນກ;
   ② ທ່ານ ນ. ມະນີວັນ ວໍລະກິດ ເປັນຮອງຫົວໜ້າພະແນກ.
3. ພະແນກການເງິນ-ການບັນຊີແລະສາງ ມີຄະນະພະແນກ 03 ທ່ານ ຄື:
   ① ທ່ານ ວັນ ສຸກສະກຸນ ເປັນຫົວໜ້າພະແນກ;
   ② ທ່ານ ພອນພະລິດ ນະໄພວົງ ແລະ ③ ທ່ານ ນ. ພານິດ ທຳມະລັງສີ ເປັນຮອງຫົວໜ້າພະແນກ.

4. ພະແນກເຕັກນິກແລະການພິມ ມີຄະນະພະແນກ 03 ທ່ານ ຄື:

① ທ່ານ ສົມພັນ ເພຍແກ້ວ ເປັນຫົວໜ້າພະແນກ;

② ທ່ານ ສຸວັນນະລິດ ຈິດຣຸບໂລກ ແລະ ③ ທ່ານ ສຳບາຍ ແສງແກ້ວມີໄຊ ເປັນຮອງຫົວໜ້າພະແນກ.

5. ພະແນກຄວບຄຸມຄຸນນະພາບຜະລິດຕະພັນ ມີຄະນະພະແນກ 03 ທ່ານ ຄື:

① ທ່ານ ຈັນທະໂຄລົບ ຈັນທະມາດ ເປັນຫົວໜ້າພະແນກ;

② ທ່ານ ນ. ຕຶ່ງຄຳ ກິບເກສອນ ແລະ ③ ທ່ານ ໄຊຍະພອນ ແສງຈັນ ເປັນຮອງຫົວໜ້າພະແນກ.

V. ສຳນັກງານປົກປ້ອງເງິນຝາກ

1. ທ່ານ ນ. ແສງດາວວີ ວົງຄຳຊາວ ກຳມະການພັກ ທຫລ, ອາດີດຫົວໜ້າສຳນັກງານປົກປ້ອງເງິນຝາກ ໄດ້ຮັບການອະນຸມັດໃຫ້ອອກພັກການ-ຮັບອຸດໜູນບຳນານ ຕາມລະບຽບການ ນັບແຕ່ເດືອນ **ພຶດສະພາ 2024 ເປັນຕົ້ນໄປ;**

2. ທ່ານ **ວົງພະຈັນ ແສງສຸວັນ** ອາດີດຫົວໜ້າ ສາຂາ ທຫລ ພາກກາງ ແຂວງສະຫວັນນະເຂດ ເປັນຫົວໜ້າສຳນັກງານປົກປ້ອງເງິນຝາກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຊາບ ແລະ ເປັນບ່ອນອີງໃນການພົວພັນປະສານງານໃນວຽກງານທີ່ຕິດພັນດ້ວຍ.

**ຫົວໜ້າກົມ**

ທະນາຄານແຫ່ງ ສ.ປ.ປ ລາວ
ກົມຈັດຕັ້ງແລະພະນັກງານ

ໂພທິຈັນ ທຳມະເທວາ